ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 12 ຫາ 16 ມິຖຸນາ 2023



ເປີດນຳໃຊ້ ນະວັດຕະກຳກະສິກຳ ແອັບມືຖື OtrustLA ຢ່າງເປັນທາງ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ເປີດນຳໃຊ້ ນະວັດຕະກຳກະສິກຳ ແອັບມືຖື OtrustLA ຢ່າງເປັນທາງການ

**ພາບ-ຂ່າວໂດຍ: ໜັງສືພິມເສດຖະກິດການຄ້າ**

ເລີ່ມຫັນເປັນດີຈີຕອນເທື່ອລະໜ້ອຍຕາມແນວທາງຂອງລັດຖະບານ ເພື່ອການບໍລິການ, ການໃຊ້ຊີວິດທີ່ທັນສະໄໝໃນສັງຄົມລາວ ຫຼ້າສຸດໃນຕອນບ່າຍ ຂອງວັນທີ 2 ມິຖຸນາ 2023 ທີ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໄດ້ມີການຈັດງານ ພິທີເປີດນຳໃຊ້ ນະວັດຕະກຳກະສິກຳ ແອັບມືຖື OtrustLA ຂຶ້ນ ຢ່າງເປັນທາງການ ໂດຍການເປັນປະທານ ຂອງທ່ານ ສົມຣັກ ວົງວິໄຊ ຮອງຫົວໜ້າກົມປູກຝັງ ແລະ ໃຫ້ກຽດເປັນປະທານຮ່ວມໂດຍທ່ານ ບຸນເລີດ ຫຼວງປະເສີດ ຮອງປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ທ່ານ ວາດສະໜາ ສີຈະເລີນ ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງ, ທ່ານ ເຈັບຮາດ ອ໋ອດ ຜູ້ຊ່ຽວຊານຈາກອົງການ GIZ ປະຈຳລາວ ພ້ອມດ້ວຍແຂກທີ່ຖືກເຊີນຈາກທັງພາກລັດ, ອົງການຈັດຕັ້ງສາກົນ, ໂຄງການ ໂຮງແຮມ-ຮ້ານອາຫານ ແລະ ຕົວແທນຊາວກະສິກອນໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ສິ່ງທີ່ສັງຄົມຈະໄດ້ເຫັນ ແລະ ໄດ້ນຳໃຊ້ຕໍ່ຈາກນີ້ໂດຍຜ່ານແອັບດັ່ງກ່າວນີ້ແມ່ນຕະຫຼາດຂາຍຜັກອໍກະນິກແບບດີຈີຕ໋ອນ ແລະ OtrustLA ບໍ່ແມ່ນສະເພາະແອັບຂາຍສິນຄ້າກະສິກຳອິນຊີ ເທົ່ານັ້ນ ແຕ່ມັນຄືນະວັດຕະກຳທີ່ຈະມາຊ່ວຍແກ້ຫຼາຍໆບັນຫາທີ່ຕິດພັນກັບການພັດທະນາກະສິກຳ ເພື່ອເຮັດແນວໃດໃຫ້










ມີຄວາມຍືນຍົງ ແລະ ມີຄວາມທັນສະໄໝ.

ນະວັດຕະກຳກະສິກຳ OtrustLA ແມ່ນຖືກຄິດຄົ້ນຂຶ້ນມາໂດຍ ທ່ານ ດວງຈັນ ສີພາວັນ ຜູ້ຈັດການ Organic Home ແລະ ພາຍໃຕ້ການສະໜັບສະໜູນທຶນສົບທົບຈາກໂຄງການ ASEAN AgriTrade. ໂດຍມີຈຸດປະສົງເພື່ອພັດທະນາຮ່ວງໂສ້ການຜະລິດ ແລະ ການສະໜອງສິນຄ້າກະສິກຳອິນຊີໃຫ້ມີຄວາມຍືນຍົງ. ສ້າງຄວາມສົມດູນລະຫວ່າງການສະໜອງ ແລະຄວາມຕ້ອງການຂອງຕະຫຼາດ, ຜູ້ທີ່ສາມາດນຳໃຊ້ ແລະ ໄດ້ຮັບຜົນປະໂຫຍດຈາກແອັບມືຖື OtrustLA ປະກອບມີ ລູກຄ້າ, ຮ້ານຄ້າ, ຊາວກະສິກອນ ແລະ ຄົນສົ່ງສິນຄ້າ.

ປະຈຸບັນ ແອັບມືຖື OtrustLA ໄດ້ຖືກນຳໃຊ້ເຂົ້າກັບວຽກການຜະລິດຂອງຊາວກະກອນ 267 ຄອບຄົວໃນນະຄອນຫລວງວຽງຈັນ ແລະ ມີການເປີດໃຫ້ສາມາດຊື້ຂາຍຕົວຈິງໄດ້ແລ້ວ, ມີລູກຄ້າຫລາຍກວ່າ 100 ທ່ານໄດ້ນຳໃຊ້ເພື່ອຊື້ຜັກອໍການິກຜ່ານທາງອອນລາຍ. ແອັບມືຖືສາມາດໃຊ້ໄດ້ທັງໃນລະບົບ IOS & Android ແລະ ທີ່ສຳຄັນແມ່ນມີບໍລິການອຳນວຍຄວາມສະດວກເພື່ອຈັດສົ່ງຜັກອໍກະນິກໃຫ້ຮອດເຮືອນລູກຄ້າ ແລະ ເກັບເງິນປາຍທາງໃນທຸກໆວັນພຸດ ແລະ ວັນເສົາ.

ຄາດວ່າ ນະວັດຕະກຳກະສິກຳດັ່ງກ່າວນີ້ຈະສ້າງການປ່ຽນແປງ ແລະ ສົ່ງເສີມການພັດທະນາວຽກງານກະສິກຳອິນຊີລາວໃຫ້ດຳເນີນໄປຕາມທິດທາງການຫັນເປັນເສດຖະກິດ ດີຈິຕ໋ອນໃນອະນາຄົດ.




ສະໜັບສະໜູນໂດຍ
ປຸ໋ຍໂພທຣີ ຫຼຸດຕົ້ນທຶນ ເພີ່ມຜົນຜະລິດເປັນມິດກັບສິ່ງແວດລ້ອມ ຕ້ອງປຸ໋ຍໂພທຣີ
ຕິດຕໍ່ໄດ້ທີ່ຕົວແທນຈຳໜ່າຍທົ່ວປະເທດ ຂອງບໍລິສັດເອໂຟເອສລາວ ຈຳກັດຜູ້ດຽວ, ສຳນັກງານຕັ້ງຢູ່
ບ້ານ ດົງປ່າແຫຼບ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໂທ:020 5961 6564; 020 5592 7332





ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;